ບໍລິສັດ ມະຫາທຶນ ເຊົ່າສິນເຊື່ອ ມະຫາຊົນ
628 ບ້ານ: ໂພນພະເນົາ ກຸ່ມ5.
ຖະໜົນ: ໄກສອນພົມວິຫານ, ເມືອງ: ໄຊເສດຖາ
ນະຄອນຫຼວງວຽງຈັນ, ໂທລະສັບ: (+856 21)418062 – 6

**ຄຳສັ່ງ**

**ສະບັບທີ 04/2026**

**ເລື່ອງ ແຜນບໍລິຫານຄວາມສ່ຽງ ປະຈຳປີ 2026**

ຕາມລະບຽບປະຕິບັດເລື່ອງ ນະໂຍບາຍ ແລະ ການບໍລິຫານຄວາມສ່ຽງ (Risk Policy and Management) ປີ 2018 ທີ່ກຳນົດໃຫ້ບໍລິສັດຕ້ອງທົບທວນແຜນບໍລິຫານຄວາມສ່ຽງ (Risk Management Plan) ຢ່າງໜ້ອຍປີລະ 1 ຄັ້ງ ເພື່ອໃຊ້ເປັນແນວທາງປະຕິບັດສຳລັບຄວບຄຸມລະດັບຄວາມສ່ຽງໃຫ້ຢູ່ໃນລະດັບທີ່ຍອມຮັບໄດ້ນັ້ນ ບໍລິສັດໄດ້ຈັດເຮັດແຜນບໍລິຫານຄວາມສ່ຽງ ປະຈຳປີ 2026 ສະບັບລົງວັນທີ 31 ມັງກອນ 2026 ຕາມເອກະສານແນບທ້າຍຄຳສັ່ງສະບັບນີ້ ສຳລັບເປັນແນວທາງໃຫ້ທຸກໜ່ວຍງານທີ່ກ່ຽວຂ້ອງໃຊ້ອ້າງອີງ ແລະ ປະຕິບັດຕາມ ດັ່ງນີ້:

1. ແຜນບໍລິຫານຄວາມສ່ຽງ (Risk Management Plan) ຕາມຄຳສັ່ງສະບັບນີ້ ເອີ້ນວ່າ ແຜນບໍລິຫານຄວາມສ່ຽງ ປະຈຳປີ 2026 ສະບັບລົງວັນທີ 31 ມັງກອນ 2026 ເຊິ່ງຜ່ານຄວາມເຫັນດີຈາກຄະນະກຳມະການບໍລິຫານຄວາມສ່ຽງ ຕາມການປະຊຸມ ຄັ້ງທີ 1/2026 ເມື່ອວັນທີ 16 ກຸມພາ 2026 ແລະ ສະພາບໍລິຫານ ຕາມການປະຊຸມ ຄັ້ງທີ 1/2026 ເມື່ອວັນທີ 19 ກຸມພາ 2026.

2. ປະເດັນຄວາມສ່ຽງທີ່ສຳຄັນ ຈາກການປະມານໃນຄັ້ງນີ້ ມີ 10 ປະເດັນທີ່ລຽງຕາມລຳດັບຄວາມສ່ຽງສູງຫາຕ່ຳ ດັ່ງນີ້:
   - 2.1. ຄວາມສາມາດໃນການຈ່າຍຄືນເງິນກູ້ (Loan Payment Capacity) - ມີຄວາມສ່ຽງ Critical Risk ເຊິ່ງເປັນຄວາມສ່ຽງໃໝ່ທີ່ຈັດລຳດັບໃນຄັ້ງນີ້
   - 2.2. ຂາດບຸກຄະລາກອນທີ່ມີສັກກະຍະພາບ (Lack of Potential Staff) ມີ 02 ຫົວຂໍ້ດັ່ງນີ້
     - ຈາກເງິນເຟີ້ ແລະ ຄ່າແຮງທີ່ເພີ່ມຂຶ້ນໃນ ສປປ ລາວ - ມີຄວາມສ່ຽງ Critical Risk ເຊິ່ງສູງຂຶ້ນກວ່າຄັ້ງກ່ອນທີ່ມີລະດັບ High Risk (ຄັ້ງກ່ອນ ຢູ່ລຳດັບທີ 3)
     - ຈາກສະພາບແວດລ້ອມໃນການເຮັດວຽກທີ່ບໍ່ປອດໄພ, ສະຫວັດດີການບໍ່ມີ ຫຼື ບໍ່ມີໂອກາດກ້າວໜ້າໃນເສັ້ນທາງການເຮັດວຽກ - ມີຄວາມສ່ຽງ Critical Risk ເຊິ່ງເປັນຄວາມສ່ຽງໃໝ່ທີ່ຈັດລຳດັບໃນຄັ້ງນີ້
   - 2.3. ຄວາມສ່ຽງດ້ານຄວາມບໍ່ແນ່ນອນຂອງເປົ້າໝາຍການຂະຫຍາຍຕົວຂອງບໍລິສັດ (Mis-targets of the company's expansion) - ມີຄວາມສ່ຽງລະດັບ High Risk ເຊິ່ງເທົ່າກັບຈາກຄັ້ງກ່ອນ (ຄັ້ງກ່ອນ ຢູ່ລຳດັບທີ 2)

2.4. ຄວາມສ່ຽງດ້ານຜົນຂາດທຶນຈາກຄຸນນະພາບໜີ້ (Credit Loss) - ກຸ່ມຜະລິດຕະພັນລູກຄ້າຜ່ອນຄ່າ – ມີຄວາມສ່ຽງ High Risk ເຊິ່ງເທົ່າກັບຈາກຄັ້ງກ່ອນ (ຄັ້ງກ່ອນ ຢູ່ລຳດັບທີ 6)

2.5. ຄວາມສ່ຽງໃນການຝ່າຝືນບໍ່ໄປຕາມກົດລະບຽບ (Violate of Regulation) - ມີຄວາມສ່ຽງລະດັບ High Risk ເຊິ່ງເທົ່າກັບຈາກຄັ້ງກ່ອນ (ຄັ້ງກ່ອນ ຢູ່ລຳດັບທີ 5)

2.6. ຄວາມສ່ຽງດ້ານສະພາວະວິກິດເສດຖະກິດຂອງປະເທດລາວ (Lao Economic Crisis) ມີ 02 ຫົວຂໍ້

- ເກີດວິກິດເສດຖະກິດຂຶ້ນລະດັບໂລກ, ສປປ. ລາວ ຫຼື ອຸດສະຫະກຳ ມີຄວາມສ່ຽງ High Risk ເຊິ່ງເທົ່າກັນກັບຄັ້ງກ່ອນ (ຄັ້ງກ່ອນ ຢູ່ລຳດັບທີ 4)
- ເກີດສົງຄາມລະຫວ່າງປະເທດຫຼາຍຂຶ້ນ ມີຄວາມສ່ຽງ High Risk ເຊິ່ງເປັນຄວາມສ່ຽງໃໝ່ທີ່ຈັດລຳດັບໃນຄັ້ງນີ້

2.7. Computer system Failure ມີຄວາມສ່ຽງ High Risk ເຊິ່ງເປັນຄວາມສ່ຽງໃໝ່ທີ່ຈັດລຳດັບໃນຄັ້ງນີ້

2.8. ຄວາມສ່ຽງດ້ານສ່ວນແບ່ງການຕະຫຼາດ ແລະ ລາຍໄດ້ລົດຕ່ຳລົງ (Market Share and income decreasing) – ການຮັກສາຍອດສິນເຊື່ອຜ່ອນຄ່າຈາກລູກຄ້າເກົ່າຜ່ອນດີ – ມີຄວາມສ່ຽງ High Risk ເຊິ່ງເປັນຄວາມສ່ຽງໃໝ່ທີ່ຈັດລຳດັບໃນຄັ້ງນີ້

2.9. ການພັດທະນາລະບົບ AI ແລະ ການວິເຄາະຂໍ້ມູນໃຫ້ເລິກເຊິ່ງ (Develop the AI and Data Analytic) ມີຄວາມສ່ຽງ High Risk ເຊິ່ງເປັນຄວາມສ່ຽງໃໝ່ທີ່ຈັດລຳດັບໃນຄັ້ງນີ້

2.10. ຄວາມສ່ຽງດ້ານສ່ວນແບ່ງການຕະຫຼາດ ແລະ ລາຍໄດ້ລົດຕ່ຳລົງ (Market Share and income decreasing) – ການຂະຫຍາຍສິນເຊື່ອລົດຈັກໃນເຂດນະຄອນຫຼວງ - ມີຄວາມສ່ຽງ High Risk ເຊິ່ງເປັນຄວາມສ່ຽງໃໝ່ທີ່ຈັດລຳດັບໃນຄັ້ງນີ້

3. ບໍລິສັດກຳນົດໃຫ້ມີການຕິດຕາມຄວາມສ່ຽງເປັນໄຕມາດ ເພື່ອໃຫ້ແນ່ໃຈມີການປະຕິບັດກົດແຜນບໍລິຫານຄວາມສ່ຽງ ແລະ ມີການຕິດຕາມປະເດັນຄວາມສ່ຽງຢ່າງຕໍ່ເນື່ອງ ເຊິ່ງຕ້ອງລາຍງານໃຫ້ຄະນະກຳມະການບໍລິຫານຄວາມສ່ຽງ ແລະ ສະພາບໍລິຫານຮັບຊາບດ້ວຍ.

ຄຳສັ່ງລະບັບນີ້ ໃຫ້ມີຜົນບັງຄັບຕັ້ງແຕ່ 19 ກຸມພາ 2026 ເປັນຕົ້ນໄປ

ສັ່ງເມື່ອ ວັນທີ 2 ມີນາ 2026

ບໍລິສັດ ... ມະຫາຊົນ MAHATHOEN LEASING PUBLIC COMPANY

(ທ່ານ ມານີບ ຕຣີລິດວິໄລ)